ຄຳຖາມ & ຄຳຕອບ

ຄຳຖາມ. ເປັນຫຍັງຈຶ່ງມີການປະເມີນຜົນຫລາຍແນວ?

ຄຳຕອບ. WAC 388-310-1450 ກ່າວໄວ້ວ່າພໍ່ແມ່ຜູ້ທີ່ຢູ່ໃນແນວທາງການຖືພາໄປສູ່ວຽກງານຕ້ອງເຂົ້າຮ່ວມໃນການປະເມີນຜົນນຳພະນັກງານສັງຄົມຂອງກົມສັງຄົມສົງເຄາະ ແລະ ສາທາຣະນະສຸກເພື່ອຈະພິຈາຣະນາເບິ່ງວ່າກິຈກັມແນວໃດທີ່ຈະຕອບສະນອງຄວາມຕ້ອງການຂອງທ່ານໄດ້ດີທີ່ສຸດ. ການປະເມີນຜົນເຫລົ່ານີ້ຈະຖືກເຮັດໃນຣະຫວ່າງຈຸດຕ່າງໆໃນການຖືພາ (ເມື່ອເວລາກົມໄດ້ພົບວ່າທ່ານຖືພາຫລືມີລູກນ້ອຍອາຍຸຕ່ຳກ່ວາປຶ່ງປີ ແລະ ຫລັງຈາກກຳເນີດ) ເພື່ອຈະຊ້ຳບອກການປ່ຽນແປງຕ່າງໆຢູ່ໃນສະພາບການຂອງຄອບຄົວຂອງທ່ານ ແລະ ໃຫ້ແນ່ໃຈວ່າກິຈກັມຕ່າງໆທີ່ຕ້ອງໄດ້ເຮັດຢູ່ຍັງຄົງເໝາະສົມຢູ່. ຕົວຢ່າງວ່າ, ຄວາມຕ້ອງການຂອງທ່ານໃນຣະຫວ່າງໄຕຣມາດທີສາມອາດຈະແຕກຕ່າງຫລາຍຈາກຄວາມຕ້ອງການຂອງທ່ານຫລັງຈາກທີ່ລູກນ້ອຍຂອງທ່ານໄດ້ເກີດແລ້ວ. ພວກເຮົາຕ້ອງການໃຫ້ ແນ່ໃຈວ່າກົດກຳນົດ WorkFirst ຂອງທ່ານຈະດຳເນີນທີ່ຈະຕອບສະນອງຄວາມຕ້ອງການຂອງທ່ານຕໍ່ໄປ.

ຄຳຖາມ. ຈະມີຫຍັງເກີດຂຶ້ນຖ້າຫາກວ່າຂ້າພະເຈົ້າບໍ່ເຂົ້າຮ່ວມໃນຫມາຍນັດການປະເມີນຜົນ?

ຄຳຕອບ. ຖ້າຫາກວ່າທ່ານບໍ່ເຂົ້າຮ່ວມໃນການປະເມີນຜົນ, ພວກເຮົາຈະດຳເນີນການເຮື່ອງເຫດຜົນດີເພື່ອຈະພິຈາຣະນາເບິ່ງວ່າທ່ານມີເຫດຜົນດີຫລືບໍ່ສຳລັບການບໍ່ເຂົ້າຮ່ວມ. ຖ້າຫາກວ່າທ່ານບໍ່ມີເຫດຜົນດີ, ທ່ານຈະຖືກລົງໂທດ ແລະ ການຊ່ວຍເຫລືອເງິນສົດ Workfirst ຂອງທ່ານຈະຖືກລຸດລົງ.

ຄຳຖາມ. ຂ້າພະເຈົ້າເປັນຄົນດຽວບໍ່ທີ່ຖືກບັງຄັບໃຫ້ເຂົ້າຮ່ວມໃນການປະເມີນຜົນ?

ຄຳຕອບ. ພໍ່ແມ່ແຕ່ລະຄົນທີ່ກຳລັງໄດ້ຮັບເງິນສົດຊ່ວຍເຫລືອ TANF ຢູ່ຕ້ອງເຂົ້າຮ່ວມໃນການປະເມີນຜົນເພື່ອຈະຊ້ຳບອກຄວາມຕ້ອງການຂອງຄອບຄົວ. ກິດຣະບຽບຂອງການເຂົ້າຮ່ວມໃນໂຄງການຟຣີຣຸທຈະຖືກອີງໃສ່ຜົນຂອກມາຂອງການປະເມີນຜົນອັນນີ້.ຖ້າຫາກວ່າພໍ່ແມ່ທັ້ງສອງຄົນຢູ່ໃນເຮືອນ, ພໍ່ ແ ມ່ຄົນໃດຄົນນຶ່ງ (ແຕ່ວ່າບໍ່ແມ່ນທັ້ງສອງ) ຈະເອົາການຍົກເວັ້ນຂອງຕົ້ກາທາຣິກໄດ້ໃນທຸກໆເວລາ.

ຄຳຖາມ. ຂ້າພະເຈົ້າຈະຮູ້ຈັກໄດ້ແນວໃດວ່າມັນຮອດເວລາແລ້ວທີ່ຈະເຮັດການປະເມີນຜົນ?

ຄຳຕອບ. ຢູ່ໃນກໍຣະນີສ່ວນຫລາຍ, ພະນັກງານສັງຄົມຫລືຜູ້ກຳກັບເອກສານຂອງທ່ານຈະສົ່ງຫນັງສືຫມາຍນັດພົບໄປໃຫ້ທ່ານ. ຖ້າຫາກວ່າທ່ານບໍ່ສາມາດເຂົ້າມາຕ້ອງການໄດ້, ເຈົ້າເຈົ້າອາດຈະສາມາດພົບກັບທ່ານໄດ້ຢູ່ເຮືອນຂອງທ່ານຫລືເຮັດການປະເມີນຜົນໄດ້ທາງໂທຣະສັບ. ຈົ່ງຕິດຕໍ່ໄປຫາພະນັກງານສັງຄົມຂອງທ່ານເພື່ອຣາຍລະອຽດເພີ້ມເຕີມກ່ຽວກັບທາງເລືອກເຫລົ່ານີ້.

ຜູ້ຈັດການເອກສານ WorkFirst _____

ໂທຣະສັບ_____

ພະນັກງານສັງຄົມ WorkFirst_____

ໂທຣະສັບ_____

Washington State Department of Social & Health Services

Transforming lives

DSHS 22-1262 LA (Rev. 7/15)

ແນວທາງການຖືພາໄປສູ່ວຽກງານ

ຂ້າພະເຈົ້າສາມາດຄາດຫມາຍແນວໃດແດ່ເມື່ອເວລາຂ້າພະເຈົ້າເປັນພາກສ່ວນນຶ່ງຂອງແນວທາງການຖືພາໄປສູ່ວຽກງານ?

ແມ່ນໃຜແດ່ເປັນພາກສ່ວນຂອງແນວທາງສຳລັບການຖືພາໄປສູ່ວຽກງານ?

ທ່ານເປັນພາກສ່ວນຂອງແນວທາງສຳລັບການຖືພາໄປສູ່ວຽກ

ງານຖ້າຫາກວ່າທ່ານໄດ້ຮັບການຊ່ວຍເຫລືອເງິນ TANF

(ການຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ) ແລະ ທ່ານຖືພາ

ຫລືເບິ່ງແຍງລູກນ້ອຍອາຍຸຕ່ຳກວ່າ 12 ເດືອນ.

ຈຸດມຸ່ງໝາຍຂອງແນວທາງສຳລັບການຖືພາໄປສູ່ວຽກງານ ແມ່ນຫຍັງ?

ກໍ່ສ້າງຄອບຄົວທີ່ອຸດົມສົມບູນ

ຊ່ວຍເຫລືອຄອບຄົວໃຫ້ເຂົ້າຮ່ວມນຳກິຈກັມຂອງໂຄງການ WorkFirst ໂດຍການຊ່ວຍເຫລືອເຂົາເຈົ້າໃຫ້ສະນອງຄວາມຕ້ອງການຂອງຄອບຄົວດ້ານພະຍາບານ ແລະ ຢ່າງອື່ນ.

ຊ່ວຍເຫລືອຄອບຄົວເພື່ອຈະກາຍເປັນກຸ້ມຕົນເອງ

ມັນມີຂັ້ນຕອນຫລາຍໆຂັ້ນຢູ່ໃນແນວທາງການຖືພາໄປສູ່ວຽກງານ. ທ່ານອາດຈະໄດ້ຜ່ານໝົດທຸກຂັ້ນຫລືພຽງແຕ່ບາງຂັ້ນເທົ່ານັ້ນ. ມັນຈະຂຶ້ນກັບການຖືພາຂອງທ່ານທີ່ທ່ານຢູ່ໃນຣະດັບຂັ້ນໃດ.

ຖ້າຫາກວ່າທ່ານເປັນຄົນໃຫມ່ສຳລັບໂຄງການ TANF, ຂັ້ນທຳອິດຂອງທ່ານຈະແມ່ນ ***ການດຳເນີນການຕີຣາຄາເບິ່ງຄັ້ນຖ້ວນທີ.***

ການຕີຣາຄາປະເມີນຜົນເບິ່ງການຖືພາໄປສູ່ວຽກງານ

ຂັ້ນຕໍ່ໄປຂອງທ່ານແມ່ນທີ່ຈະເຂົ້າຮ່ວມ ແລະ ຮຽກການປະເມີນຜົນເບິ່ງການຖືພາໄປສູ່ວຽກງານໃຫ້ແລ້ວນຳພະນັກງານສັງຄົມຂອງ WorkFirst.

ການປະເມີນຜົນເບິ່ງຈະ:

- ຊີ້ບອກຄວາມຕ້ອງການ, ຄວາມເຂັ້ມແຂງ ແລະ ສິ່ງກີດກັ້ນທີ່ອາດເປັນໄປໄດ້ຂອງຄອບຄົວຂອງທ່ານ
- ຊີ້ບອກການບໍຣິການທີ່ທ່ານອາດຈະມີສິດໄດ້ຮັບໃນຂະນະທີ່ທ່ານຢູ່ໃນແນວທາງການຖືພາໄປສູ່ວຽກງານ
- ພິຈາຣະນາເບິ່ງການເຂົ້າຮ່ວມທີ່ຕ້ອງຮຽກຂອງທ່ານ ແລະ ຊີ້ບອກກິຈກັມຂອງໂຄງການ WorkFirst ອັນເໝາະສົມ



ການເຂົ້າຮ່ວມນຳໂຄງການ ຣກຟິຣຊທໃນໄຕຣມາດທີ່ນຶ່ງ ແລະ ທີ່ສອງ

ຖ້າຫາກວ່າທ່ານຢູ່ໃນໄຕຣມາດທີ່ນຶ່ງຫລືສອງ (ສາມຫາຫົກເດືອນ) ຂອງການຖືພາຂອງທ່ານ, ທ່ານຈະຖືກບັງຄັບໃຫ້ເຂົ້າຮ່ວມເຕັມເວລາຫລືໃກ້ເຕັມເວລາເທົ່າທີ່ສາມາດຮຽກໄດ້ໃນກິຈກັມຂອງໂຄງການ WorkFirst. ການເຂົ້າຮ່ວມເຕັມເວລາ ແມ່ນ 32-40 ຊົ່ວໂມງຕໍ່ອາທິດ.

ຜົນອອກມາຂອງການຕີຣາຄາອັນຖ້ວນທີ ແລະ ການປະເມີນຜົນໃນການຖືພາໄປສູ່ວຽກງານຈະພິຈາຣະນາຫາວ່າທ່ານຕ້ອງໄດ້ເຂົ້າຮ່ວມຫລາຍເທົ່າໃດ.

ການເຂົ້າຮ່ວມນຳໂຄງການ WorkFirst ໃນໄຕຣມາດທີສາມ

ອີງຕາມຜົນອອກມາຂອງການປະເມີນຜົນຂອງທ່ານ, ພວກເຮົາຈະພິຈາຣະນາຊີ້ບອກວ່າທ່ານຈະຕ້ອງເປັນ ຫລື ບໍ່:

- ຜູ້ເຂົ້າຮ່ວມຂອງໂຄງການ WorkFirst ຕາມສະມັກໃຈ ຫລື
- ຜູ້ເຂົ້າຮ່ວມຂອງໂຄງການ WorkFirst ທີ່ຕ້ອງເປັນ ຫລື
- ມີເງື່ອນໄຂທີ່ຈະເລືອກທີ່ຈະບໍ່ເຂົ້າຮ່ວມໃນກິຈກັມຂອງໂຄງການWorkFirst.

ການເຂົ້າຮ່ວມນຳໂຄງການ WorkFirst ສຳລັບພໍ່ແມ່ທີ່ມີລູກນ້ອຍແຕ່ກຳເນີດໄປຮອດ 12 ເດືອນ

ຫລັງຈາກລູກນ້ອຍຂອງທ່ານໄດ້ເກີດແລ້ວ, ທ່ານຕ້ອງຮັດການປະເມີນຜົນການຖືພາໄປສູ່ວຽກງານໃຫ້ແລ້ວ.

ການປະເມີນຜົນຈະພິຈາຣະນາຫາຣະດັບຂອງການເຂົ້າຮ່ວມນຳໂຄງການ WorkFirst ຂອງທ່ານ.ທ່ານອາດຈະ:

- ຖືກຖືວ່າເປັນຜູ້ເຂົ້າຮ່ວມຂອງໂຄງການ WorkFirst ຕາມສະມັກໃຈ
- ຖືກຖືວ່າເປັນຜູ້ເຂົ້າຮ່ວມຂອງໂຄງການ WorkFirst ທີ່ຕ້ອງເປັນ
- ສາມາດເລືອກເອົາການຍົກເວັ້ນຂອງດັກທາຣິກ (ທ່ານຈະໃຊ້ການຍົກເວັ້ນອັນນີ້ໄດ້ຮອດ 365 ວັນ, ຫລື 12 ເດືອນໃນຕລອດຊີວິດຂອງທ່ານ, ກ່ອນວັນເກີດປີທຳອິດຂອງລູກນ້ອຍຂອງທ່ານ.)

ຖ້າຫາກວ່າທ່ານມີສິດໃນການຍົກເວັ້ນຂອງດັກທາຣິກ, ທ່ານຈະເລືອກທີ່ຈະບໍ່ເຂົ້າຮ່ວມໃນກິຈກັມຂອງ WorkFirst ໄດ້. ເພື່ອຈະມີສິດໄດ້ຮັບ, ທ່ານຕ້ອງໄດ້ເຂົ້າຮ່ວມໃນການປະເມີນຜົນທີ່ຕ້ອງໄດ້ຮັດ.

WAC 388-310-1450

ທ່ານອາດຈະປະເຊີນຫນ້ານຳການປັບໄຫມລົງໂທດໃນຣະຫວ່າງເວລາສ່ວນນຶ່ງຂອງການຖືພາຂອງທ່ານຫລືຫລັງຈາກທີ່ລູກຂອງທ່ານເກີດແລ້ວຖ້າຫາກວ່າທ່ານບໍ່ເຂົ້າຮ່ວມນຳໃນການປະເມີນຜົນການຖືພາໄປສູ່ວຽກງານທີ່ຕ້ອງໄດ້ຮັດທຸກໆຢ່າງຫລືຖ້າຫາກວ່າການປະເມີນຜົນຫລ່ານັ້ນຊີ້ບອກວ່າທ່ານເປັນຜູ້ເຂົ້າຮ່ວມຕ້ອງເປັນໃນກິຈກັມຂອງ WorkFirst ແລະ ທ່ານບໍ່ເຂົ້າຮ່ວມນຳ.

ຈຸດເປົ້າໝາຍຂອງພວກເຮົາແມ່ນເພື່ອຈະກໍ່ສ້າງຄອບຄົວທີ່ອຸດົມສົມບູນ, ບໍ່ແມ່ນຈະລົງໂທດເຂົາເຈົ້າ, ແຕ່ວ່າທ່ານຕ້ອງໄດ້ຮັດສ່ວນຂອງທ່ານ ແລະ ເຂົ້າຮ່ວມໃນແນວທາງສຳລັບການຖືພາໄປສູ່ວຽກງານຕາມທີ່ຕ້ອງໄດ້ຮັດ.